ປປ 13/11/2024
ເວລາ 10.38 ໂມງ

# ຜົນການຈັດຕັ້ງປະຕິບັດ
# ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ປະຈຳປີ 2024, ທິດທາງແຜນການ ປີ 2025 ແລະ ຮ່າງແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ X (2026-2030)

**ນຳສະເໜີໂດຍ ທ່ານ ນ. ພອນອັນ ອຸທະອິງ, ຮອງລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ**

**ກອງປະຊຸມໂຕະມົນປະຈຳປີ 2024**

**14 ພະຈິກ 2024**

# ເນື້ອໃນບົດນຳສະເໜີ

1. ການສະຫຼຸບຕີລາຄາແຜນພັດທະນາເສດຖະກິດ-ສັງຄົມ ໄລຍະ 9 ເດືອນ ປີ 2024
2. ທິດທາງແຜນພັດທະນາເສດຖະກິດ-ສັງຄົມ ປີ 2025
3. ຮ່າງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ X (2026-2030)

# ສະຫຼຸບຕີລາຄາ
# ການຈັດຕັ້ງປະຕິບັດແຜນພັດທະນາ
# ເສດຖະກິດ-ສັງຄົມ
# ໄລຍະ 9 ເດືອນ ປີ 2024

# ເປົ້າໝາຍດ້ານເສດຖະກິດ

- ວຽກງານພົ້ນເດັ່ນ
- ຜົນສຳເລັດ

- **ດ້ານການຜະລິດ:** ຊຸກຍູ້ຜະລິດສິນຄ້າເພື່ອທົດແທນການນຳເຂົ້າ ແລະ ສົ່ງອອກ, ການເປີດປີທ່ອງທ່ຽວ 2024
- **ດ້ານການເງິນ:** ການປັບປຸງນິຕິກຳຕິດພັນກັບການເກັບລາຍຮັບຈາກຄ່າຊັບພະຍາກອນທຳມະຊາດ, ສິນຄ້າຟຸມເຟືອຍ, ການຫັນເປັນທັນສະໄໝ ແລະ ອື່ນໆ
- **ດ້ານເງິນຕາ:** ດຳເນີນນະໂຍບາຍເງິນຕາທີ່ຮັດກຸມຫຼາຍຂຶ້ນ ແລະ ນະໂຍບາຍອັດຕາແລກປ່ຽນທີ່ມີການຄຸ້ມຄອງຂອງລັດ, ຄຸ້ມຄອງເງິນຕາຕ່າງປະເທດຈາກການສົ່ງອອກ

| ລາຍການ | ປະຕິບັດ 9/2024 | ແຜນການ | ສົມທຽບໃສ່ແຜນ |
|---|---|---|---|
| ອັດຕາການຂະຫຍາຍຕົວ GDP | 4,6% | 4,5% | ຄາດວ່າບັນລຸແຜນ |
| ລາຍຮັບງົບປະມານ | 43.467 ຕື້ກີບ | 50.107 ຕື້ກີບ | 87% |
| | | | |
| ອັດຕາເງິນເຟີ້ | 24,8% | ຢູ່ໃນລະດັບໜຶ່ງຕົວເລກທ້າຍປີ 2024 | ບໍ່ບັນລຸແຜນ |
| ອັດຕາແລກປ່ຽນແຕ່ລະປີທຽບໃສ່ເງິນໂດລາ | 4,4% | ໝັ້ນຄົງຢູ່ໃນລະດັບທີ່ບໍ່ສ້າງແຮງກົດດັນຕໍ່ອັດຕາເງິນເຟີ້ | ບໍ່ບັນລຸແຜນ |
| ການລົງທຶນທັງໝົດ | 68.662 ຕື້ກີບ | 56.784 ຕື້ກີບ | 121% |

# ເປົ້າໝາຍດ້ານຊັບພະຍາກອນມະນຸດ

| • ວຽກງານພົ້ນເດັ່ນ | • ຜົນສຳເລັດ |
|---|---|
| • **ດ້ານການສຶກສາ:** ປັບປຸງຄຸນນະພາບການຮຽນ-ການສອນ, ສະໜອງອຸປະກອນ, ແກ້ໄຂບັນຫາການຂາດແຄນຄູ ແລະ ການປະລະການຮຽນ ຕາມມະຕິ 09/ລບ<br>• **ດ້ານສາທາລະນະສຸກ:** ປັບປຸງຄຸນນະພາບການບໍລິການສຸຂະພາບ, ຕາໜ່າງການບໍລິການສາທາລະນະສຸກ, ໃຫ້ການບໍລິການສຸຂະພາບແມ່ ແລະ ເດັກ, ປະຕິບັດໂພຊະນາການ<br>• **ດ້ານແຮງງານ:** ສົ່ງເສີມສະຖາບັນການສຶກສາ, ສູນພັດທະນາສີມືແຮງງານຂອງພາກລັດ ແລະເອກະຊົນພັດທະນາສີມືແຮງງານ, ຈັດສົ່ງແຮງງານເຂົ້າສູ່ຕຳແໜ່ງງານ, ປັບປຸງມາດຖານສີມືແຮງງານ | • **ດ້ານການສຶກສາ:** ມີ 16 ຕົວຊີ້ວັດ, ໃນນີ້ ມີ 9 ຕົວຊີ້ວັດ ບັນລຸໄດ້ຕາມແຜນ, ມີ 7 ຕົວຊີ້ວັດບໍ່ສາມາດບັນລຸໄດ້ຕາມແຜນ ເປັນຕົ້ນ: ອັດຕາປະລະການຮຽນຂອງນັກຮຽນຊັ້ນປະຖົມ, ອັດຕາເລື່ອນຊັ້ນ ປ.5 ຂຶ້ນ ມ.1 ແລະ ອັດຕາເຂົ້າຮຽນໃໝ່ລວມ ມ.4<br>• **ດ້ານສາທາລະນະສຸກ:** ມີ 11 ຕົວຊີ້ວັດ, ໃນນີ້ 7 ຕົວຊີ້ວັດ ຄາດວ່າບັນລຸໄດ້ຕາມແຜນ ແລະ ອີກ 4 ຕົວຊີ້ວັດຄາດວ່າຈະບໍ່ບັນລຸແຜນ ເປັນຕົ້ນ ອັດຕາເດັກນ້ອຍລຸ່ມ 5 ປີທີ່ມີນ້ຳໜັກຕ່ຳກວ່າມາດຕະຖານ, ອັດຕາການໃຫ້ວັກຊີນກັນພະຍາດໃນເດັກ<br>• **ດ້ານແຮງງານ:** ຝຶກສີມືແຮງງານໄດ້ 6.592 ຄົນ, ເທົ່າກັບ 82,4% ຂອງແຜນການ(ແຜນ: 8.000 ຄົນ) ແລະ ການຈັດຫາວຽກເຮັດງານທຳໄດ້ 97.999 ຄົນ ລື່ນແຜນ 6,74% (ແຜນ: 91.814 ຄົນ) |

# ເປົ້າໝາຍດ້ານການປັບປຸງຊີວິດການເປັນຢູ່

## • ວຽກງານພົ້ນເດັ່ນ

- ປັບປຸງ ແລະ ກໍ່ສ້າງພື້ນຖານໂຄງລ່າງ (ເສັ້ນທາງ, ໂຮງຮຽນ, ສຸກສາລາ, ນໍ້າລິນ) ໃນເຂດຈຸດສຸມພັດທະນາ, ເຂດຊົນນະບົດ ແລະ ເຂດຫ່າງໄກສອກຫຼີກ
- ສ້າງວຽກເຮັດງານທໍາ ແລະ ລາຍໄດ້ໃຫ້ປະຊາຊົນ (ດ້ວຍການສົ່ງເສີມການປູກພືດ, ການລ້ຽງສັດ)
- ການສະໜອງສິນເຊື່ອໃຫ້ປະຊາຊົນ ເພື່ອທໍາການຜະລິດ

## • ຜົນສໍາເລັດ

| ຕົວຊີ້ບອກ | ຫົວໜ່ວຍ | ປະຕິບັດ 9 ເດືອນ | ແຜນການ | ສົມທຽບແຜນ |
|---|---|---|---|---|
| ສ້າງຄອບຄົວພົ້ນທຸກ | ຄອບຄົວ | 9.415 | 35.000 | 27% |
| ສ້າງບ້ານພົ້ນທຸກ | ບ້ານ | 58 | 500 | 12% |
| ສ້າງຄອບຄົວພັດທະນາ | ຄອບຄົວ | 3.738 | 33.000 | 11% |
| ສ້າງບ້ານພັດທະນາ | ບ້ານ | 17 | 500 | 3% |
| ສ້າງຕົວແບບບ້ານໃຫຍ່ກາຍເປັນຕົວເມືອງນ້ອຍ | ບ້ານ | 4 | 6 | 150% |
| ສ້າງກອງທຶນພັດທະນາບ້ານ | ເມືອງ | 4 | 14 | 14% |

## • ເປົ້າໝາຍສິ່ງແວດລ້ອມ

- ຕິດຕັ້ງສະຖານີເຕືອນໄພລ່ວງໜ້າໃໝ່ ໄດ້ 5 ແຫ່ງ ເທົ່າກັບ 83,33% ຂອງແຜນການ (ແຜນການ: ໃຫ້ໄດ້ 6 ແຫ່ງ)
- ສ້າງສະຖານີອຸຕຸນິຍົມໃໝ່ ໄດ້ 39 ແຫ່ງ ລື່ນແຜນ (ແຜນ: 10 ແຫ່ງ),
- ການຂຶ້ນທະບຽນອອກໃບຕາດິນ ໄດ້ 125.441 ຕອນ ເທົ່າກັບ 42% ຂອງແຜນການ (ແຜນ: 300.000 ຕອນ
- ສົ່ງເສີມການຜະລິດກະສິກຳສະອາດ, ການນຳໃຊ້ລົດໄຟຟ້າ, ພະລັງງານລົມ ແລະ ແສງອາທິດ
- ສ້າງດຳລັດວ່າດ້ວຍ ສິນເຊື່ອກາກບອນ
- ເພີ່ມທະວີການຕ້ານ ແລະ ສະກັດກັ້ນການບຸກລຸກທຳລາຍປ່າໄມ້ ແລະ ໄຟໄໝ້ລາມປ່າ ຕາມຄຳສັ່ງ 11/ນຍ ເຮັດໃຫ້ປ່າໄມ້ຖືກທຳລາຍ ແລະ ໝອກຄວັນຫຼຸດລົງ

## • ເປົ້າໝາຍການເຊື່ອມໂຍງ-ເຊື່ອມຈອດ

- ປັບປຸງ ແລະ ກໍ່ສ້າງໂຄງລ່າງພື້ນຖານຄົມມະນາຄົມ ເພື່ອເຊື່ອມໂຍງ-ເຊື່ອມຈອດ (ທາງ 13 ໃຕ້, ທາງ 13 ເໜືອ ທາງເລກທີ 12)
- ປັບປຸງເສັ້ນທາງເຂົ້າຫາແຫຼ່ງທ່ອງທ່ຽວ, ເສັ້ນທາງພາຍໃນຕົວເມືອງ
- ສຳເລັດການກໍ່ສ້າງທ່າບົກ 3 ແຫ່ງ, ກຳລັງດຳເນີນການກໍ່ສ້າງ 1 ແຫ່ງ ແລະ ສຶກສາຄວາມເປັນໄປໄດ້ໃນການສ້າງທ່າບົກອີກ 5 ແຫ່ງ
- ສົ່ງເສີມຂະແໜງການພາກລັດ ແລະ ພາກເອກະຊົນ ຫັນມານຳໃຊ້ສູນຂໍ້ມູນດິຈິຕອນ
- ສຳເລັດການຕິດຕັ້ງ ແລະ ຂະຫຍາຍການນຳໃຊ້ລະບົບຫ້ອງການທັນສະໄໝ (e-Office) ຈຳນວນ 197 ບັນຊີລາຍຊື່, ຈຳນວນ 6 ພາກສ່ວນ

# ເປົ້າໝາຍການຄຸ້ມຄອງບໍລິຫານລັດ

- ຂະຫຍາຍສູນບໍລິການຜ່ານປະຕູດຽວ ໄດ້ 4 ແຫ່ງ (ເມືອງນານ, ແຂວງຫຼວງພະບາງ; ເມືອງຊະນະຄາມ, ແຂວງວຽງຈັນ; ເມືອງອານຸວົງ, ແຂວງໄຊສົມບູນ ແລະ ເມືອງງອຍ, ແຂວງຫຼວງພະບາງ)

- ໄດ້ທົດລອງຫັນຫົວໜ່ວຍວິຊາການທີ່ມີລາຍຮັບໄປສູ່ກຸ້ມຕົນເອງດ້ານງົບປະມານ 5 ຫົວໜ່ວຍ

- ໄດ້ສຳເລັດການປັບປຸງ ແລະ ສ້າງກົດໝາຍ ຈຳນວນ 13 ສະບັບ

# ຈຸດອ່ອນ ແລະ ຂໍ້ຄົງຄ້າງ

1) ການຜະລິດສິນຄ້າ ແລະ ບໍລິການ ຍັງບໍ່ທັນແຂງແຮງ ແລະ ເປັນຂະບວນເທົ່າທີ່ຄວນ;
2) ອັດຕາເງິນເຟີ້, ລາຄາສິນຄ້າ ແລະ ອັດຕາແລກປ່ຽນ ຍັງຢູ່ໃນລະດັບສູງ;
3) ການປັບປຸງກົນໄກ, ຂອດຂັ້ນເພື່ອອໍານວຍຄວາມສະດວກໃຫ້ແກ່ການລົງທຶນ ແລະ ການດໍາເນີນທຸລະກິດ ຍັງຊັກຊ້າ;
4) ຄຸນນະພາບການສຶກສາໂດຍທົ່ວໄປຍັງຕໍ່າ, ການປະລະການຮຽນຍັງສູງ ໂດຍສະເພາະຢູ່ໃນເຂດຊົນນະບົດ; ການສະໜອງແຮງງານບໍ່ທັນພຽງພໍກັບຄວາມຕ້ອງການ
5) ການພັດທະນາຊົນນະບົດ ແລະ ແກ້ໄຂຄວາມຫຍຸ້ງຍາກຂອງປະຊາຊົນຍັງມີຄວາມຊັກຊ້າ

# ແຜນພັດທະນາ
# ເສດຖະກິດ-ສັງຄົມ ປະຈຳປີ 2025

| • ທິດທາງລວມ | • ຄາດໝາຍຕົ້ນຕໍ |
|---|---|
| 1) ພັດທະນາເສດຖະກິດໃຫ້ມີຄວາມເຂັ້ມແຂງ ແລະ ແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະ ກິດ-ການເງິນ ໃຫ້ເປັນຮູບປະທຳເທື່ອລະກ້າວ<br>2) ສົ່ງເສີມການຜະລິດພາຍໃນຢ່າງແຂງແຮງ ໂດຍເລັ່ງໃສ່ການຜະລິດສິນຄ້າທີ່ມີທ່າແຮງ ຕິດພັນກັບການສະໜອງທຶນໃຫ້ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ<br>3) ສືບຕໍ່ພັດທະນາຊັບພະຍາກອນມະນຸດໃຫ້ມີຄຸນນະພາບທີ່ດີຂຶ້ນ; ສືບຕໍ່ແກ້ໄຂບັນຫາການຂາດແຄນຄູ, ການປະລະການຮຽນ, ປັບປຸງຄຸນນະພາບຂອງການບໍລິການສາທາລະນະສຸກ, ການພັດທະນາສີມືແຮງງານຕິດພັນກັບການສ້າງວຽກເຮັດງານທຳ<br>4) ສືບຕໍ່ພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກຂອງປະຊາຊົນ ຢ່າງມີຈຸດສຸມ ແລະ ແຂງແຮງກວ່າເກົ່າ<br>5) ປົກປັກຮັກສາ ແລະ ນຳໃຊ້ຊັບພະຍາກອນທຳມະຊາດຢ່າງສົມເຫດສົມຜົນ ແລະ ມີປະສິດທິຜົນສູງ ຕາມທິດຮັບປະກັນຄຸນນະພາບ, ສີຂຽວ ແລະ ຍືນຍົງ | • ສູ້ຊົນໃຫ້ລວມຍອດມູນຄ່າຜະລິດຕະພັນພາຍໃນ (GDP) ເພີ່ມຂຶ້ນໃນລະດັບ 4,8%<br>• ຄຸ້ມຄອງອັດຕາເງິນເຟີ້ໃຫ້ຢູ່ໃນລະດັບໜຶ່ງຕົວເລກໃນທ້າຍປີ 2025 ແລະອັດຕາແລກປ່ຽນເໝັ້ງຕີງຢູ່ໃນລະດັບບໍ່ສ້າງແຮງກົດດັນຕໍ່ອັດຕາເງິນເຟີ້;<br>• ສູ້ຊົນເກັບລາຍຮັບງົບປະມານທັງໝົດ ໃຫ້ໄດ້ ປະມານ 69.600 ຕື້ກີບ ແລະ ລາຍຈ່າຍທັງໝົດ ໃຫ້ໄດ້ 69.600 ຕື້ກີບ<br>• ອັດຕາປະລະການຮຽນຂອງນັກຮຽນຊັ້ນປະຖົມ ບໍ່ໃຫ້ເກີນ 4%<br>• ອັດຕາການຕາຍຂອງເດັກ ລຸ່ມ 5 ປີ ໃຫ້ຍັງເຫຼືອ 30/1.000 ຄົນ ຂອງເດັກນ້ອຍເກີດມີຊີວິດ<br>• ສູ້ຊົນຂຶ້ນທະບຽນອອກໃບຕາດິນໃນຂອບເຂດທົ່ວປະເທດ ໃຫ້ໄດ້ 500.000 ຕອນ |

| ເປົ້າໝາຍ | ວຽກຈຸດສຸມບູລິມະສິດ |
|---|---|
| ເປົ້າໝາຍ 1: ການຂະຫຍາຍຕົວຂອງເສດຖະກິດ | ສືບຕໍ່ແກ້ໄຂບັນຫາເຄັ່ງຮ້ອນດ້ານເສດຖະກິດ-ການເງິນ ອັດຕາເງິນເຟີ້, ອັດຕາແລກປ່ຽນ, ລາຄາສິນຄ້າ ແລະ ໜີ້ສິນສາທາລະນະ ໂດຍສຸມໃສ່:<br>1) ຊຸກຍູ້ສົ່ງເສີມການຜະລິດເພື່ອທົດແທນການນຳເຂົ້າ ແລະ ເປັນສິນຄ້າສົ່ງອອກ, ປັບປຸງລະບົບການບໍລິການຂົນສົ່ງ ໃຫ້ມີຄວາມສະດວກ, ວ່ອງໄວ, ສືບຕໍ່ໂຄສະນາ ແລະ ສົ່ງເສີມການທ່ອງທ່ຽວໃຫ້ດີຂຶ້ນ<br>2) ສືບຕໍ່ດຳເນີນນະໂຍບາຍເງິນຕາທີ່ຮັດກຸມ ແລະ ນະໂຍບາຍອັດຕາແລກປ່ຽນທີ່ມີການຄຸ້ມຄອງຂອງລັດ, ຄຸ້ມຄອງເງິນຕ່າງຕ່າງປະເທດ<br>3) ຂຸດຄົ້ນແຫຼ່ງລາຍຮັບງົບປະມານແຫ່ງລັດ ຕາມລະບຽບກົດໝາຍໄດ້ກຳນົດໄວ້, ອັດທຸກຊ່ອງວ່າງການຮົ່ວໄຫຼດ້ານງົບປະມານ, ຂະຫຍາຍຖານລາຍຮັບໃໝ່, ປະຕິບັດລາຍຈ່າຍຕາມທິດປະຢັດມັດທະຍັດ ແລະ ຕ້ານການຟູມເຟືອຍ<br>4) ປັບປຸງໂຄງສ້າງລາຄາສິນຄ້າທີ່ມີຜົນກະທົບຕໍ່ຊີວິດການເປັນຢູ່ຂອງປະຊາຊົນ, ພະນັກງານລັດຖະກອນ ແລະ ທະຫານ-ຕຳຫຼວດ<br>5) ສືບຕໍ່ຄຸ້ມຄອງການນຳເຂົ້າສິນຄ້າ ທີ່ສາມາດຜະລິດຢູ່ພາຍໃນປະເທດ, ສະກັດກັ້ນການນຳເຂົ້າສິນຄ້າທີ່ບໍ່ຖືກກົດໝາຍ, ຫຼຸດຜ່ອນການນຳເຂົ້າສິນຄ້າຟູມເຟືອຍ,<br>6) ສືບຕໍ່ປັບປຸງກົນໄກ, ນະໂຍບາຍ, ລະບຽບການສົ່ງເສີມການລົງທຶນ ແລະ ການດ□າເນີນທຸລະກິດ ໃຫ້ມີຄວາມສະດວກ, ວ່ອງໄວ |

| ເປົ້າໝາຍ | ວຽກຈຸດສຸມບູລິມະສິດ |
| --- | --- |
| **ເປົ້າໝາຍ 2: ການພັດທະນາ ຊັບພະຍາກອນ ມະນຸດ** | 1. ສຸມໃສ່ປັບປຸງຄຸນນະພາບການຮຽນ-ການສອນໃນທຸກຊັ້ນທຸກສາຍ, ສືບຕໍ່ການແກ້ໄຂບັນຫາການຂາດແຄນຄູ, ເພີ່ມອັດຕາການເຂົ້າຮຽນ ແລະ ການປະລະການຮຽນ.<br>2. ປັບປຸງວຽກງານສາທາລະນະສຸກໃຫ້ມີຄຸນນະພາບ, ສະໜອງອຸປະກອນການແພດ ແລະ ເພີ່ມພະນັກງານແພດ, ພະຍາບານ, ຜະດຸງຄັນ ໃຫ້ສະຖານທີ່ບໍລິການ; ປັບປຸງ ແລະ ຂະຫຍາຍການບໍລິການປິ່ນປົວສຸຂະພາບໃຫ້ທົ່ວເຖິງ ແລະ ເຂັ້ມແຂງ<br>3. ສຸມໃສ່ພັດທະນາສີມືແຮງງານ, ຈັດຫາວຽກເຮັດງານທຳ, ຄຸ້ມຄອງແຮງງານ ແລະ ປະຕິບັດຍຸດທະສາດປົກປ້ອງສັງຄົມໃຫ້ກວ້າງຂວາງ |
| **ເປົ້າໝາຍ 3: ປັບປຸງຊີວິດການເປັນຢູ່ຂອງປະຊາຊົນ** | 1. ສືບຕໍ່ພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ຢູ່ເຂດຈຸດສຸມພັດທະນາ, ເຂດຫ່າງໄກສອກຫຼີກ<br>2. ພັດທະນາລະບົບປະກັນສັງຄົມໃຫ້ມີຄວາມເຂັ້ມແຂງ<br>3. ພັດທະນາໄວໜຸ່ມ, ແມ່ຍິງ, ເດັກນ້ອຍ, ຄວາມສະເໝີພາບຍິງ-ຊາຍ ແລະ ຄວາມກ້າວໜ້າແມ່ຍິງ<br>4. ສຸມໃສ່ວຽກງານແກ້ໄຂລະເບີດບໍ່ທັນແຕກ ໃຫ້ມີຄວາມຄ່ອງຕົວກວ່າເກົ່າ |

| ເປົ້າໝາຍ | ວຽກຈຸດສຸມບູລິມະສິດ |
|---|---|
| **ເປົ້າໝາຍ 4: ປົກປັກຮັກສາສິ່ງແວດລ້ອມ** | 1. ສືບຕໍ່ເອົາໃຈໃສ່ການຄຸ້ມຄອງ, ປົກປັກຮັກສາ ແລະ ຟື້ນຟູຊັບພະຍາກອນທໍາມະຊາດ ດິນ, ນໍ້າ, ອາກາດ, ປ່າໄມ້ ໃຫ້ມີຄວາມອຸດົມສົມບູນ<br>2. ເອົາໃຈໃສ່ແກ້ໄຂບັນຫາຈູດປ່າໃຫ້ຫຼຸດລົງ, ຄຸ້ມຄອງມົນລະພິດ ແລະ ສິ່ງເສດເຫຼືອໃຫ້ດີຂຶ້ນ<br>3. ຈັດຕັ້ງປະຕິບັດວຽກງານຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວ ແລະ ການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ. |
| **ເປົ້າໝາຍ 5: ປັບປຸງໂຄງລ່າງພື້ນຖານ ແລະ ການຮ່ວມມື** | 1. ສືບຕໍ່ພັດທະນາບັນດາເສັ້ນທາງເພື່ອເຊື່ອມໂຍງເຊື່ອມຈອດ,<br>2. ສຸມໃສ່ຟື້ນຟູບັນດາໂຄງລ່າງເສັ້ນທາງທີ່ໄດ້ຮັບຜົນກະທົບຈາກໄພພິບັດປີຜ່ານມາ |
| **ເປົ້າໝາຍ 6: ການຄຸ້ມຄອງບໍລິຫານລັດ** | 1. ສືບຕໍ່ປັບປຸງລະບົບ, ກົນໄກການບໍລິຫານລັດ ໃຫ້ມີຄວາມກະທັດຮັດ, ວ່ອງໄວ ແລະ ທັນສະໄໝ<br>2. ສືບຕໍ່ປັບປຸງການຫັນຫົວໜ່ວຍງົບປະມານທີ່ມີລາຍຮັບວິຊາການໄປກຸ້ມຕົນເອງທາງດ້ານງົບປະມານ ແລະ ສ້າງນິຕິກໍາທີ່ກ່ຽວກັບການຫັນເປັນພາລະກອນໃຫ້ສໍາເລັດ.<br>3. ສືບຕໍ່ສ້າງ ແລະ ປັບປຸງກົດໝາຍ, ນິຕິກໍາໃຕ້ກົດໝາຍ ຕາມແຜນກໍານົດໄວ້. |

# ຮ່າງ
# ແຜນພັດທະນາເສດຖະກິດ-ສັງຄົມ
# ແຫ່ງຊາດ 5 ປີ ຄັ້ງທີ X (2026-2030)

# ຄຳຂວັນ

**“ ສ້າງເສດຖະກິດເອກະລາດເປັນເຈົ້າຕົນເອງຢ່າງຕັ້ງໜ້າ,**
**ນຳໃຊ້ທຸກທ່າແຮງຢ່າງມີປະສິດທິຜົນ, ພັດທະນາເສດຖະກິດ-ສັງຄົມຕາມທິດສີຂຽວ ແລະ ຍືນຍົງ ”**

# ທິດທາງລວມ

ຍົກສູງລະດັບຄຸນນະພາບຊີວິດຂອງປະຊາຊົນໃຫ້ສູງຂຶ້ນ, ຮັບປະກັນສະຖຽນລະພາບການເມືອງ ຢ່າງໝັກ ແໜ້ນ, ສັງຄົມມີຄວາມສະຫງົບສຸກ, ມີຄວາມເປັນສາມັກຄີເປັນປຶກແຜ່ນ ແລະ ພັດທະນາປະເທດຊາດໃຫ້ຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ.

ເປັນເຈົ້າຕົນເອງໃນການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນຢ່າງເປັນຮູບປະທຳຫຼາຍຂຶ້ນ, ບໍ່ສ້າງໜີ້ສິນໜັກໜ່ວງ; ດຳເນີນການຄຸ້ມຄອງ-ບໍລິຫານເສດຖະກິດ ຕາມກົນໄກຕະຫຼາດ ທີ່ມີການການດັດສົມ ແລະ ຄຸ້ມຄອງຂອງລັດ ເພື່ອພັດທະນາເສດຖະກິດໃຫ້ຂະຫຍາຍຕົວ ແລະ ເຂັ້ມແຂງ.

ເອົາໃຈໃສ່ພັດທະນາເສດຖະກິດ, ສັງຄົມ ແລະ ການປົກປັກຮັກສາສິ່ງແວດລ້ອມ ຢ່າງສົມສ່ວນ ຕາມທິດສີຂຽວ ແລະ ຍືນຍົງ.

ສຸມໃສ່ກໍ່ສ້າງ ແລະ ພັດທະນາຊັບພະຍາກອນມະນຸດ, ຖັນແຖວນັກຮຽນຮູ້-ປັນຍາຊົນ ໃຫ້ສາມາດຕອບສະໜອງໃຫ້ແກ່ການສ້າງສາປະເທດໃນເງື່ອນໄຂໃໝ່, ສາມາດປະກອບສ່ວນເຂົ້າໃນການຄົ້ນຄ້ວາ, ການປະດິດສ້າງໃໝ່ໃຫ້ແກ່ປະເທດຊາດ ນັບມື້ນັບຫຼາຍ ແລະ ໂດດເດັ່ນຂຶ້ນ.

ຍົກສູງປະສິດທິພາບການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ ຕາມທິດສ້າງລັດທີ່ປົກຄອງດ້ວຍກົດໝາຍ.

ເຄື່ອນໄຫວວຽກງານການຕ່າງປະເທດຢ່າງເປັນເຈົ້າການ ແລະ ຫ້າວຫັນ, ໄດ້ຮັບຄວາມເຊື່ອໝັ້ນ, ໄດ້ຮັບການສະໜັບສະໜູນ ແລະ ຊ່ວຍເຫຼືອຈາກເພື່ອນມິດ, ມີບົດບາດພົ້ນເດັ່ນສູງຂຶ້ນ ໃນເວທີພາກພື້ນ ແລະ ສາກົນ.

# ການພັດທະນາ ຮອດປີ 2030

ເປົ້າໝາຍ 1: ສ້າງເສດຖະກິດ ເອກະລາດ ເປັນເຈົ້າຕົນເອງ ດ້ວຍການນໍາໃຊ້ທ່າແຮງເພື່ອ ເຮັດໃຫ້ເສດຖະກິດມີສະຖຽນ ລະພາບ ແລະ ຂະຫຍາຍຕົວ ຢ່າງຕໍ່ເນື່ອງ, ມີຄຸນນະພາບ, ໝັ້ນທ່ຽງ ແລະ ຍືນຍົງ

ເປົ້າໝາຍ 2: ພັດທະນາ ຊັບພະຍາກອນມະນຸດໃຫ້ມີຄຸນ ນະພາບສູງຂຶ້ນ ແລະ ສາມາດຮູ້ນໍາ ໃຊ້ເຕັກໂນໂລຊີທີ່ທັນສະໄໝ

ເປົ້າໝາຍ 3: ປັບປຸງຊີວິດການ ເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນ, ການພັດທະນາສັງຄົມໃຫ້ມີການ ຂະຫຍາຍຕົວ ແລະ ມີຄຸນນະພ ພາບສູງຂຶ້ນ

ເປົ້າໝາຍ 4: ປົກປັກຮັກສາ ຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມໃຫ້ມີຄວາມ ຍືນຍົງ ແລະ ສາມາດກຽມພ້ອມ ຮັບມືກັບການປ່ຽນແປງດິນຟ້າ ອາກາດ ແລະ ໄພພິບັດຕ່າງໆ

ເປົ້າໝາຍ 5: ການເຊື່ອມໂຍງ-ເຊື່ອມ ຈອດພາກພື້ນ ແລະ ສາກົນຢ່າງ ກວ້າງຂວາງ ແລະ ມີປະສິດທິຜົນ

ເປົ້າໝາຍ 6: ການຄຸ້ມຄອງ- ບໍລິຫານລັດໃຫ້ມີປະສິດທິພາບ, ການເມືອງມີສະຖຽນລະພາບ, ສັງຄົມມີຄວາມສະຫງົບ, ເປັນ ລະບຽບຮຽບຮ້ອຍ, ຍຸຕິທໍາ ແລະ ສີວິໄລ

# ການພັດທະນາ ຮອດປີ 2030

## ເປົ້າໝາຍ 1. ສ້າງເສດຖະກິດ ເອກະລາດ ເປັນເຈົ້າຕົນເອງ ດ້ວຍການນຳໃຊ້ທ່າແຮງເພື່ອເຮັດໃຫ້ເສດຖະກິດມີສະຖຽນລະພາບ ແລະ ຂະຫຍາຍຕົວຢ່າງຕໍ່ເນື່ອງ, ມີຄຸນນະພາບ, ໝັ້ນທ່ຽງ ແລະ ຍືນຍົງ

1. ນຳໃຊ້ທ່າແຮງ ເພື່ອຍູ້ແຮງເສດຖະກິດໃຫ້ຂະຫຍາຍຕົວຢ່າງຕໍ່ເນື່ອງ, ມີຄວາມເຂັ້ມແຂງ ແລະ ມີຄຸນນະພາບສູງຂຶ້ນ
2. ເສດຖະກິດມະຫາພາກມີຄວາມເຂັ້ມແຂງ ແລະ ໝັ້ນທ່ຽງ
3. ຍົກສູງປະສິດທິພາບການລົງທຶນ ໃຫ້ມີຄຸນນະພາບ ແລະ ມີປະສິດທິຜົນສູງ
4. ພັດທະນາຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ໄປສູ່ຄຸນນະພາບໃໝ່ໃຫ້ມີຄວາມເຂັ້ມແຂງ ແລະ ສາມາດແຂ່ງຂັນກັບພາກພື້ນ ແລະ ສາກົນ
5. ພັດທະນາລັດວິສາຫະກິດ ແລະ ເສດຖະກິດລວມໝູ່ຂອງປະຊາຊົນ ໃຫ້ມີຄຸນນະພາບ ແລະ ມີຄວາມເຂັ້ມແຂງ
6. ພັດທະນາເສດຖະກິດດີຈິຕອນໃຫ້ມີຄວາມເຂັ້ມແຂງ ເພື່ອຂັບເຄື່ອນການພັດທະນາເສດຖະກິດ-ສັງຄົມ ໃຫ້ມີການຂະຫຍາຍຕົວທີ່ຍືນຍົງ

## ເປົ້າໝາຍ 2. ພັດທະນາຊັບພະຍາກອນມະນຸດໃຫ້ມີຄຸນນະພາບສູງຂຶ້ນ ແລະ ສາມາດຮູ້ນຳໃຊ້ເຕັກໂນໂລຊີທີ່ທັນສະໄໝ

1. ພັດທະນາການສຶກສາໃຫ້ມີຄຸນນະພາບ ເພື່ອຮອງຮັບການພັດທະນາຂອງປະເທດຊາດ
2. ປັບປຸງຄຸນນະພາບວຽກງານສາທາລະນະສຸກ ແລະ ການບໍລິການດ້ານສາທາລະນະສຸກ ໃຫ້ມີຄຸນນະພາບ ແລະ ທົ່ວເຖິງ
3. ພັດທະນາສີມືແຮງງານໃຫ້ໄດ້ປະລິມານ ແລະ ຄຸນນະພາບ ເພື່ອຕອບສະໜອງຄວາມຕ້ອງການພັດທະນາ
4. ບຸກຄະລາກອນຂອງພາກລັດໄດ້ຮັບການພັດທະນາ ແລະ ມີຄຸນນະພາບສູງຂຶ້ນ

## ເປົ້າໝາຍ 3. ປັບປຸງຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນ, ການພັດທະນາສັງຄົມໃຫ້ມີການຂະຫຍາຍຕົວ ແລະ ມີຄຸນນະພພາບສູງຂຶ້ນ

1. ພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກຂອງປະຊາຊົນໃຫ້ມີຄຸນນະພາບດີຂຶ້ນ
2. ປັບປຸງວຽກງານຄໍ້າປະກັນສະບຽງອາຫານ ແລະ ໂພຊະນາການ ໃຫ້ທົ່ວເຖິງ ແລະ ມີຄຸນນະພາບສູງຂຶ້ນ
3. ສົ່ງເສີມ ແລະ ພັດທະນາໄວໜຸ່ມ, ແມ່ຍິງ, ເດັກ ແລະ ຄວາມສະເໝີພາບຍິງ-ຊາຍ ໃຫ້ມີຄຸນນະພາບດີຂຶ້ນ
4. ພັດທະນາວຽກງານຖະແຫຼງຂ່າວໃຫ້ທັນສະໄໝ ແລະ ວ່ອງໄວ, ສົ່ງເສີມວັດທະນະທຳ ທີ່ເປັນເອກະລັກຂອງຊາດ, ກ້າວໜ້າ ແລະ ສ້າງໃຫ້ສັງຄົມມີຄວາມສາມັກຄີເປັນປຶກແຜ່ນ ແລະ ສີວິໄລ
5. ປັບປຸງລະບົບປະກັນສັງຄົມ-ປົກປ້ອງສັງຄົມໃຫ້ກວ້າງຂວາງ ແລະ ມີຄຸນນະພາບ
6. ແກ້ໄຂບັນຫາລະເບີດບໍ່ທັນແຕກ ແລະ ປັບປຸງຊີວິດການເປັນຢູ່ຂອງປະຊາຊົນທີ່ໄດ້ຮັບຜົນກະທົບຈາກລະເບີດບໍ່ທັນແຕກ ໃຫ້ດີຂຶ້ນເທື່ອລະກ້າວ

# ການພັດທະນາ ຮອດປີ 2030

## ເປົ້າໝາຍ 4. ປົກປັກຮັກສາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມໃຫ້ມີຄວາມຍືນຍົງ ແລະ ສາມາດກຽມພ້ອມຮັບມືກັບການປ່ຽນແປງດິນຟ້າອາກາດ ແລະ ໄພພິບັດຕ່າງໆ

1. ການຄຸ້ມຄອງ ແລະ ນຳໃຊ້ຊັບພະຍາກອນທຳມະຊາດປ່າໄມ້, ທີ່ດິນ, ນ້ຳ ແລະ ແຮ່ທາດ ຢ່າງມີແຜນການ, ປະຢັດ, ໃຫ້ເກີດຜົນປະໂຫຍດສູງສຸດ ແລະ ມີຄວາມຍືນຍົງ
2. ສົ່ງເສີມວຽກງານການເຕີບໂຕສີຂຽວ ແລະ ວຽກງານການແກ້ໄຂບັນຫາປ່ຽນແປງດິນຟ້າອາກາດ ເພື່ອຫຼຸດຜ່ອນ ແລະ ເພີ່ມການດູດຊັບທາດອາຍເຮືອນແກ້ວ ໃຫ້ໄດ້ຮັບການຈັດຕັ້ງປະຕິບັດຢ່າງຕັ້ງໜ້າ ແລະ ກວ້າງຂວາງ
3. ເພີ່ມທະວີການປ້ອງກັນ, ການຄວບຄຸມ ແລະ ການຟື້ນຟູຫຼັງໄພພິບັດຕ່າງໆ

## ເປົ້າໝາຍ 5. ການເຊື່ອມໂຍງ-ເຊື່ອມຈອດກັບພາກພື້ນ ແລະ ສາກົນຢ່າງກວ້າງຂວາງ ແລະ ມີປະສິດທິຜົນ

1. ພັດທະນາໂຄງລ່າງພື້ນຖານທີ່ສາມາດເຊື່ອມຈອດ-ເຊື່ອມໂຍງພາຍໃນ, ພາກພື້ນ ແລະ ສາກົນ ເພື່ອເອື້ອອຳນວຍໃຫ້ແກ່ການຜະລິດ, ການບໍລິການ, ການຄ້າ ແລະ ການລົງທຶນ
2. ເສີມຂະຫຍາຍການພົວພັນຮ່ວມມື, ການເຊື່ອມໂຍງການຄ້າ ແລະ ການລົງທຶນກັບພາກພື້ນ ແລະ ສາກົນ ຢ່າງຕັ້ງໜ້າ ແລະ ກວ້າງຂວາງຂຶ້ນກວ່າເກົ່າ
3. ພັດທະນາເຂດແຄ້ວນ ແລະ ທ້ອງຖິ່ນ ໃຫ້ມີຄວາມສົມດຸນ, ເຂັ້ມແຂງ ແລະ ສອດຄ່ອງກັບທ່າແຮງບົ່ມຊ້ອນ
4. ການພັດທະນາຕົວເມືອງ ແລະ ເຂດເສດຖະກິດພິເສດ ໃຫ້ກາຍເປັນຖານການຜະລິດ, ການລົງທຶນ, ການຄ້າ ແລະ ການທ່ອງທ່ຽວ ເພື່ອເຊື່ອມໂຍງກັບພາກພື້ນ ແລະ ສາກົນ

## ເປົ້າໝາຍ 6. ການຄຸ້ມຄອງ ແລະ ບໍລິຫານລັດໃຫ້ມີປະສິດທິພາບ, ການເມືອງມີສະຖຽນລະພາບ ແລະ ສັງຄົມມີຄວາມສະຫງົບ ແລະ ເປັນລະບຽບຮຽບຮ້ອຍ

1. ຍົກສູງປະສິດທິພາບການປົກຄອງ-ການຄຸ້ມຄອງບໍລິຫານລັດໃຫ້ມີຄວາມກະທັດຮັດ, ວ່ອງໄວ ແລະ ເຂັ້ມງວດຕາມກົດໝາຍ ແລະ ວຽກງານ 3 ສ້າງ ໃຫ້ເຂົ້າສູ່ລວງເລິກ ແລະ ປະຕິບັດຕົວຈິງຢ່າງມີປະສິດທິຜົນສູງ
2. ປັບປຸງກົນໄກ, ລະບຽບການປະສານງານລະຫວ່າງພາກລັດດ້ວຍກັນໃຫ້ມີຄວາມເປັນເອກະພາບ ແລະ ວ່ອງໄວຂຶ້ນ
3. ຮັບປະກັນໃຫ້ມີສະຖຽນລະພາບທາງດ້ານການເມືອງ, ມີຄວາມສະຫງົບ ແລະ ມີຄວາມເປັນລະບຽບຮຽບຮ້ອຍໃນສັງຄົມ, ສັງຄົມມີຄວາມສາມັກຄີປອງດອງ, ປະຊາທິປະໄຕ, ຍຸຕິທຳ ແລະ ສີວິໄລ

# ມາດຕະການ, ນະໂຍບາຍ ແລະ ກົນໄກຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ X (2026-2030)

1. ບັນດາຂະແໜງການຂັ້ນສູນກາງ ແລະ ທ້ອງຖິ່ນ ສຸມໃສ່ຈັດຕັ້ງຜັນຂະຫຍາຍ 6 ເປົ້າໝາຍໃຫ້ເປັນແຜນງານໂຄງການຂະແໜງການຕົນ.
2. ກຳນົດເປົ້າໝາຍສະເພາະ, ຄາດໝາຍ, ແລະ ວຽກຈຸດສຸມ, ຄຽງຄູ່ກັບແຜນງານໂຄງການລະອຽດ ໂດຍການໝູນໃຊ້ຊັບພະຍາກອນ ແລະ ຊຸກຍູ້ບັນດານະໂຍບາຍ ແນໃສ່ຍົກສູງພື້ນຖານໂຄງລ່າງເສດຖະກິດ ແລະ ສັງຄົມ.
3. ລັດຖະບານອອກດຳລັດວ່າດ້ວຍການຈັດຕັ້ງປະຕິບັດ ແລະ ກະຊວງແຜນການ ແລະ ການລົງທຶນຈະອອກຄຳແນະນຳດ້ານວິຊາການ, ໂດຍສຸມໃສ່ການປະສານສົມທົບກັບຂະແໜງການສູນກາງ ແລະ ທ້ອງຖິ່ນໃຫ້ມີປະສິດທິຜົນ.
4. ມີການແບ່ງຄວາມຮັບຜິດຊອບຂອງບັນດາຂະແໜງການ ແລະ ທ້ອງຖິ່ນ, ບັນດາກະຊວງ ແລະ ຄູ່ຮ່ວມພັດທະນາ.

# ຂະບວນການສ້າງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ X (2026-2030)

ຂະແໜງການກ່ຽວຂ້ອງ

NSEDP ຄັ້ງທີ 9 (2021-2025)

ປະເມີນກາງສະໄໝ ແຜນ NSEDP ຄັ້ງທີ 9

ກະຊວງກ່ຽວຂ້ອງ

ຄູ່ຮ່ວມພັດທະນາ


ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

(ຮ່າງທີ 2)

ແຜນພັດທະນາ
ເສດຖະກິດ-ສັງຄົມແຫ່ງຊາດ
5 ປີ ຄັ້ງທີ **X (2026-2030)**

ນະຄອນຫຼວງວຽງຈັນ
11 ຕຸລາ 2024

ກອງປະຊຸມປຶກສາຫາລື

ກອງປະຊຸມໂຕະມົນປະຈຳປີ

ແຜນ NSEDP ຄັ້ງທີ 10 (2026-2030)

ແຜນຍຸດທະສາດການເງິນ

ກອບຜົນໄດ້ຮັບກັບຕົວຊີ້ບອກຫຼັກ

# ແຜນວຽກໃນຕໍ່ໜ້າ

| | |
|---|---|
| **ກອງປະຊຸມ ໂຕະມົນ 2024** | ສັງລວມຄໍາເຫັນ ແລະ ນໍາເຂົ້າປັບປຸງຮ່າງແຜນພັດທະນາເສດຖະກິດ-ສັງຄົມ ຄັ້ງທີ 10 |
| **ທົບທວນຄໍາເຫັນຈາກກອງປະຊຸມໂຕະມົນ ແລະ ກອງປະຊຸມປຶກສາຫາລືກ່ອນກອງປະຊຸມໂຕະມົນ** | ພິຈາລະນາບັນດາຄໍາເຫັນ ເພື່ອສາມາດນໍາຄໍາເຫັນທີ່ເປັນປະໂຫຍດເຂົ້າໃນຮ່າງແຜນ 10 |
| **ປຶກສາຫາລືເພີ່ມຕື່ມກັບພາກສ່ວນກ່ຽວຂ້ອງ** | ປະສານສົມທົບບັນດາກະຊວງ ແລະ ຄູ່ຮ່ວມພັດທະນາ ເພື່ອທົບທວນຄືນເປົ້າໝາຍ, ແຜນວຽກຈຸດສຸມ ແລະ ບູລິມະສິດ, ແລະ ຍຸດທະສາດການເງິນ |
| **ປັບປຸງຮ່າງແຜນ 10** | ປັບປຸງຮ່າງເອກະສານ NSEDP ເພື່ອລວມເອົາຜົນຂອງຄໍາເຫັນທີ່ຖືກພິຈາລະນາເຂົ້າໃສ່; ພ້ອມທັງ ທົບທວນຄືນເປົ້າຫມາຍ ແລະ ຕົວຊີ້ບອກທີ່ເປັນພື້ນຖານສໍາລັບກອບຜົນໄດ້ຮັບຂອງ NSEDP ຄັ້ງທີ 10 |
| **ການພັດທະນາຂອບຕິດຕາມ ແລະ ປະເມີນຜົນ** | ຮ່າງ ແລະ ທົບທວນຄືນຂອບຕິດຕາມ ແລະ ປະເມີນຜົນ ຂອງ NSEDP; ແລະ ປຶກສາຫາລືປະສານສົມທົບກັບກະຊວງກ່ຽວຂ້ອງ ແລະ ຄູ່ຮ່ວມພັດທະນາ ເພື່ອສະຫລຸບຂອງກອບຜົນຂອງ NSEDP |
| **ຄວາມສອດຄ່ອງກັບຍຸດທະສາດການເງິນຂອງແຜນ 10** | ປະສານສົມທົບກັບກະຊວງການເງິນ ເພື່ອໃຫ້ຮ່າງແຜນ 10 ສອດຄ່ອງຍຸດທະສາດການເງິນ ຮັບປະກັນຕອບສະໜອງດ້ານງົບປະມານລົງໃນການຈັດຕັ້ງປະຕິບັດ |
| **ສໍາເລັດແຜນ 10 ສະບັບສຸດທ້າຍ** | ສໍາເລັດແຜນ 10 ສະບັບສຸດທ້າຍ ເພື່ອເຜີຍແຜ່ ແລະ ນໍາສະເໜີຕໍ່ສະພາແຫ່ງຊາດ |

# ຂອບໃຈ